Souphanouvong University Journal of Multidisciplinary Research and Development
2024, Vol: 10, No: 3, 129-138
https://doi.org/10.69692/SUJMRD100129

# The Participation toward on Corporate Social Responsibilities of the Guesthouse Business in the Luang Prabang city Luang Prabang Province

**Phoutthasone DUANGSAVATH[1], Soudtida HOONGSENGPHA[2], Thongkhoon PHOMACHACK[2]**

*Department of Business Management, Faculty of Economics and Tourism, Souphanouvong University, Lao PDR*

***[1]Correspondence:***
*Phutthasone Duangsavath, Natural Resources and Environment Office, LuangPrabang City, Tel: +856 20-5998 9541, Email: phout-99 @gmail.com Nan, [2] Confucius Institute at Souphanouvong University*

***Submitted: June 25, 2024***

***Revised: July 19, 2024***

***Accepted: August 07, 2024***

## Abstract

The objectives of this research were to study the operating conditions of guesthouse business in the Luang Prabang city, to study The Participation toward on Corporate Social Responsibilities of the guesthouse business in the Luang Prabang city Luang Prabang Province and to analyze the Corporate Social Responsibilities participation influences the operation of the guesthouse business in the Luang Prabang city Luang Prabang Province. The research was conducted by using a questionnaire as an instrument for collecting data from 275 Guesthouses in Luang Prabang city, Luang Prabang Province. The Cronbach alpha reliability coefficient was 0.968. The statistics used for data analysis were frequency, percentage, mean, standard deviation, multiple Regression analysis. The results found that:

In the operation of the guesthouse business in Luang Prabang City have a succussed at high level consisted of marketing, internal Management, products/services and Financial. The Corporate Social Responsibilities participation influences the operation of the guesthouse business in the Luang Prabang city, it was found that: in the past, the business used to participate in social support activities 1-2 times per year and the type of social support activity is to contribute to traditional festivals. Participate in the responsibility of doing business with fairness, participate in the responsibility of good business management and finally participate in the responsibility of protecting the environment respectively, and The Social responsibility in terms of the Conducting business with fairness in the organization, the participating development in community and social, environmental were positive influenced the overall operational success of the guesthouse business in the Luang Prabang city.

**Keywords:** *Corporate Social Responsibilities, Operational success, Guest house Business.*

## 1. ພາກສະເໜີ

ໃນປັດຈຸບັນການດໍາເນີນທຸລະກິດເລີ່ມມີຄວາມຊັບຊ້ອນ ແລະ ມີການແຂ່ງຂັນທີ່ຮຸນແຮງເພີ່ມສູງຂຶ້ນ ເຊິ່ງການດໍາເນີນທຸລະກິດໃຫ້ປະສົບຜົນສໍາເລັດຈຶ່ງຕ້ອງມີການປັບຕົວທາງດ້ານການຮຽນຮູ້ ແລະ ການພັດທະນາອົງກອນຢ່າງຕໍ່ເນື່ອງ ເພື່ອໃຫ້ສາມາດເຂົ້າກັບສະພາບແວດລ້ອມທາງສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມທີ່ປ່ຽນແປງໄປ ແຕ່ລະທຸລະກິດຕ້ອງມີການປັບຕົວ ເພື່ອເຮັດໃຫ້ຕົນເອງສາມາດຢູ່ຫຼອດ ໂດຍແນວທາງທີ່ຈະຊ່ວຍໃຫ້ທຸລະກິດສາມາດຜ່ານພົ້ນວິກິດເສດຖະກິດທີ່ເກີດຂຶ້ນໄດ້ນັ້ນແມ່ນການເຂົ້າມາມີສ່ວນຮ່ວມສ້າງກິດຈະກໍາມີຄວາມຮັບຜິດຊອບອັນເປັນ

ພື້ນຖານ ຫຼື ຫຼາຍກວ່າທີ່ອົງກອນຕ້ອງມີເພື່ອສັງຄົມ ເຊັ່ນ: ຄວາມຮັບຜິດຊອບຕໍ່ຄຸນນະພາບສິນຄ້າ ແລະ ບໍລິການທີ່ຈໍາໜ່າຍໃຫ້ກັບຜູ້ບໍລິໂພກ, ຄວາມຮັບຜິດຊອບຕໍ່ຜົນຕອບແທນສະຫວັດດີການພະນັກງານ, ຄວາມປອດໄພຂອງພະນັກງານ, ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍຂອງທໍາມະຊາດ ແລະ ສິ່ງແວດລ້ອມອັນເປັນຜົນມາຈາກການຜະລິດສິນຄ້າ ແລະ ການໃຫ້ບໍລິການຂອງທຸລະກິດເປັນຫຼັກ, ໃນຄະນະດຽວກັນກໍ່ຕ້ອງຕອບສະໜອງຄວາມຕ້ອງການຂອງສັງຄົມທີ່ຮຽກຮ້ອງໃຫ້ທຸລະກິດດໍາເນີນງານໂດຍຍຶດຫຼັກຖືກຕ້ອງຍຸດຕິທໍາ ໃນການປະກອບທຸລະກິດໂດຍມີແນວຄິດກ່ຽວກັບການສ້າງກິດຈະກໍາຄວາມຮັບຜິດຊອບຕໍ່ສັງຄົມ ເປັນອົງປະກອບທີ່ສໍາຄັນໃນການດໍາເນີນງານ ເຊິ່ງຄວາມສໍາເລັດຂອງອົງກອນທຸລະກິດບໍ່ແມ່ນການພິຈາລະນາພຽງແຕ່ຜົນປະກອບການ ແລະ ຈໍານວນຕົວເລກທາງການເງິນ, ລະດັບຄວາມພໍໃຈຂອງຜູ້ບໍລິຫານ ຫຼື ຫຸ້ນສ່ວນ ຫຼື ພະນັກງານເທົ່ານັ້ນແຕ່ຍັງຕ້ອງໄດ້ພິຈາລະນາເຖິງການຕອບສະໜອງຕໍ່ຄວາມຄາດຫວັງຂອງສັງຄົມ ໂດຍໃຫ້ສັງຄົມເຂົ້າມາມີສ່ວນສໍາຄັນໃນການກໍານົດຄວາມຢູ່ຫຼອດ ແລະ ຄວາມກ້າວໜ້າຂອງທຸລະກິດທີ່ຈະເລີນເຕີບໂຕຢ່າງຍືນຍົງໃນອານາຄົດ (Sopapron, 2007). ດັ່ງນັ້ນ, ການເຂົ້າມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມຈຶ່ງເປັນເລື່ອງສໍາຄັນ ແລະ ຈໍາເປັນສໍາລັບທຸລະກິດທີ່ທຸລະກິດທັງພາກລັດ ແລະ ເອກະຊົນຈະຕ້ອງຊອກຫາແນວທາງນໍາມາໝູນໃຊ້ເພື່ອສ້າງເປັນນະໂຍບາຍ ແລະ ກ້າວໄປສູ່ການດາເນີນງານທົ່ວທັງອົງກອນທຸລະກິດ. ເຊິ່ງໃນປັດຈຸບັນຫຼາຍອົງກອນບໍ່ວ່າຈະເປັນໜ່ວຍງານຂອງພາກລັດ ແລະ ພາກເອກະຊົນ ໄດ້ມີການນໍາແນວຄິດເລື່ອງຄວາມຮັບຜິດຊອບຕໍ່ສັງຄົມມາໝູນໃຊ້ເພື່ອມຸ່ງສູ່ຄວາມເປັນອົງກອນທີ່ຍືນຍົງ ໂດຍມີການກໍານົດເປັນກົນລະຍຸດແຜນຍຸດທະສາດທາງທຸລະກິດ ເພື່ອການພັດທະນາທີ່ມີຄວາມຍືນຍົງ ເນື່ອງຈາກໄດ້ຮັບຄວາມເຊື່ອຖື ແລະ ເປັນທີ່ຍອມຮັບຈາກຜູ້ມີສ່ວນໄດ້ສ່ວນເສຍກັບທຸລະກິດ ເຊັ່ນ: ລູກຄ້າ, ຄູ່ຄ້າ ແລະ ສັງຄົມເພາະເປັນອົງກອນທີ່ມີຄຸນນະພາບ ແລະ ຄຸນນະທໍາ ອີກທັງອົງກອນຍັງມີການສົ່ງເສີມຄວາມຮັບຜິດຊອບຕໍ່ສັງຄົມບໍ່ວ່າຈະເປັນໃນຮູບແບບຂອງການຈັດສໍາມະນາ, ການໃຫ້ລາງວັນ, ການຝຶກອົບຮົມໂດຍສະເພາະໃນອົງກອນເອກະຊົນຂະໜາດໃຫຍ່ ບໍ່ແມ່ນແຕ່ພຽງດໍາເນີນກິດຈະກໍາດ້ານຄວາມຮັບຜິດຊອບຕໍ່ສັງຄົມໃນເລື່ອງຂອງອາສາສະມັກພະນັກງານ ຫຼື ການເຮັດກິດຈະກໍາເພື່ອສັງຄົມເທົ່ານັ້ນ ຍັງມີການນໍາເອົາຄວາມຮັບຜິດຊອບຕໍ່ສັງຄົມມາເປັນສ່ວນໜຶ່ງຂອງການດໍາເນີນງານພາຍໃນອົງກອນ ແລະ ຕໍ່ກັບພະນັກງານໃນອົງກອນອີກດ້ວຍ ໂດຍການສ້າງຈິດສໍານຶກໃນເລື່ອງຄວາມຮັບຜິດຊອບຕໍ່ສັງຄົມພາຍໃນອົງກອນ ແລະ ພະນັກງານຮ່ວມກັນ ຕະຫຼອດເຖິງສ້າງຄວາມສໍາພັນອັນດີຕໍ່ກັບຊຸມຊົນ ເພື່ອຈະໄດ້ມີເຄືອຂ່າຍໃນການເຮັດວຽກດ້ານຄວາມຮັບຜິດຊອບຕໍ່ສັງຄົມໃນອານາຄົດ (Institute of Social Business, 2009).

ແຂວງຫຼວງພະບາງ ເປັນແຂວງໜຶ່ງທີ່ມີທ່າແຮງຫຼາຍດ້ານທີ່ສາມາດສ້າງ ແລະ ພັດທະນາອຸດສາຫະກໍາການທ່ອງທ່ຽວ, ໃນໄລຍະຜ່ານມາພັກ ແລະ ລັດ ໄດ້ນໍາພາ-ຊີ້ນໍາ ແລະ ໃຫ້ການສະໜັບສະໜູນໃນການສົ່ງເສີມວຽກງານການທ່ອງທ່ຽວໂດຍກໍານົດໃຫ້ເປັນຂະແໜງການບູລິມະສິດອັນດັບໜຶ່ງ, ເປັນເສົາຄໍ້າໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ເຊິ່ງສຸມໃສ່ສ້າງຫຼວງພະບາງໃຫ້ກາຍເປັນສູນກາງການທ່ອງທ່ຽວ ແລະ ທາງຜ່ານທີ່ມີຄຸນະພາບລະດັບພາກພື້ນ ແລະ ສາກົນ, ຕະຫຼອດໄລຍະທີ່ຖືເອົາການທ່ອງທ່ຽວເປັນຂະແໜງເສດຖະກິດປາຍແຫຼມໃນການພັດທະນາເສດຖະກິດ-ສັງຄົມ ໄດ້ເຮັດໃຫ້ເສດຖະກິດພັດທະນາດີຂຶ້ນ ແລະ ຊີວິດການເປັນຢູ່ ຂອງປະຊາຊົນ ໄດ້ຮັບການຍົກລະດັບດີຂຶ້ນເປັນກ້າວໆມາເຊັ່ນ: ໂຄງລ່າງພື້ນຖານໄດ້ຮັບການປັງປຸງ, ສິ່ງຮອງຮັບ ແລະ ກິດຈະກໍາການຕະຫຼາດທາງການທ່ອງທ່ຽວໄດ້ຮັບການພັດທະນາ ແລະ ສົ່ງເສີມ, ພາກລັດ ແລະພາກທຸລະກິດ ໄດ້ຮັບການສົ່ງເສີມໃຫ້ມີຂີດຄວາມສາມາດທາງດ້ານວິຊາການທີ່ສູງຂຶ້ນ ສິ່ງເຫຼົ່ານີ້ໄດ້ພັກດັນໃຫ້ສະພາບການທ່ອງທ່ຽວຂະຫຍາຍຕົວຢ່າງໄວວາ ແລະ ສາມາດຍາດນາມມະຍົດເມືອງທ່ອງທ່ຽວຍອດນິຍົມຂອງໂລກ 6 ປີຊ້ອນອັນໄດ້ເຮັດໃຫ້ນັກທ່ອງທ່ຽວເດີນທາງມາທ່ຽວຫຼວງພະບາງນັບມື້ເພີ່ມຂຶ້ນໂດຍສະເລ່ຍ 15-20% ຕໍ່ປີ (ອົງຄະນະພັກແຂວງຫຼວງພະບາງ ຄັ້ງທີ VIII, 2020: 11). ອັນໄດ້ກາຍເປັນປັດໄຈທີ່ເຮັດໃຫ້ທຸລະກິດໃຫ້ບໍລິການທາງການທ່ອງທ່ຽງຂະຫຍາຍຕົວເພີ່ມຂຶ້ນ ໂດຍເຫັນໄດ້ຄື: ມີຫົວ

ໜ່ວຍທຸລະກິດບໍລິສັດທ່ອງທ່ຽວ 115 ບໍລິສັດ, ໂຮງແຮມ-ລີສອດ 102 ແຫ່ງ, ເຮືອນພັກ 416 ແຫ່ງ, ຮ້ານອາຫານ 384 ຮ້ານ ແລະ ຮ້ານບັນເທີງ-ຄາຣາໂອເກະ 45 ຮ້ານ ເຊິ່ງໃນນີ້ສະເພາະຢູ່ພາຍໃນນະຄອນ ຫຼວງພະບາງມີທຸລະກິດເຮືອນພັກ 275 ແຫ່ງ, ຮ້ານອາຫານ 173 ຮ້ານ ແລະ ຮ້ານບັນເທີງ-ຄາຣາໂອເກະ 18 ຮ້ານ ແລະ ທຸລະກິດເຫຼົ່ານີ້ໄດ້ປະກອບສ່ວນເຂົ້າໃນການສ້າງວຽກເຮັດງານທຳ, ສ້າງລາຍຮັບ ແລະ ຍົກສູງຊີວິດການເປັນຢູ່ຂອງປະຊາຊົນກໍ່ຄືການສ້າງປະຖົມປັດໄຈໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ, ອັນຍັງເປັນຕົວຂັບເຄື່ອນເຮັດໃຫ້ເສດຖະກິດຂອງຊາດ ແລະ ທ້ອງຖິ່ນມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນການຂະຫຍາຍຕົວຂອງວຽກງານດັ່ງກ່າວກໍ່ຍັງປະກົດມີບັນຫາໃນການດຳເນີນງານໃນດ້ານການເອົາປຽບ , ການສໍ້ໂກງນັກທ່ອງທ່ຽວ, ຄ່າຄອງຊີບສູງຖ້າທຽບກັບຈຸດໝາຍປາຍທາງດ້ານ ການທ່ອງທ່ຽວອື່ນ, ຄຸນນະພາບຂອງການບໍລິການບໍ່ສົມຄູ່ກັບລາຄາ, ບັນຫາດ້ານການເຂົ້າເຖິງ-ສິ່ງອຳນວຍຄວາມສະດວກບໍ່ພຽງພໍໃນແຫຼ່ງທ່ອງທ່ຽວ, ສະຕິໃນການເປັນເຈົ້າການໃນການເຄົາລົບກົດໝາຍ ຂອງຜູ້ປະກອບການບາງຈຳນວນ ຍັງເຮັດບໍ່ໄດ້ດີເຫັນໄດ້ຈາກຄວາມຕື່ນຕົວຕໍ່ກັບການສືບຕໍ່ໃບອະນຸຍາດດຳເນີນທຸລະກິດຂອງຕົນທີ່ໝົດກຳນົດແລ້ວ, ການແກ້ໄຂບັນຫາທຸລະກິດເຮືອນພັກທີ່ໃຫ້ຊາວຕ່າງປະເທດມາເຊົ່າ ແລະ ບໍລິຫານຍັງບໍ່ທັນໄດ້ຕາມຄາດໝາຍ ຍ້ອນເຈົ້າຂອງທຸລະກິດບໍ່ໃຫ້ການຮ່ວມມືໃນການສະໜອງຂໍ້ມູນກ່ຽວກັບສັນຍາເຊົ່າ ຫຼື ສັນຍາຈ້າງງານ, ການຈັດລະດັບຂັ້ນມາດຕະຖານເຮືອນພັກຍັງບໍ່ທັນໄດ້ຕາມຄາດໝາຍເທົ່າທີ່ຄວນ ເຊິ່ງປະກົດການເຫຼົ່ານີ້ມັນສະແດງໃຫ້ເຫັນເຖິງຈັນຍາບັນ ຫຼື ຄວາມຮັບຜິດຊອບຕໍ່ສັງຄົມຂອງທຸລະກິດເຮືອນພັກໃນແຂວງຫຼວງພະບາງ ເຊິ່ງຍັງບໍ່ທັນພົ້ນເດັ່ນໃນດ້ານການຈັດຕັ້ງປະຕິບັດຕໍ່ສັງຄົມ (ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ, 2020).

ຈາກເຫດຜົນຂ້າງເທິງຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈຄົ້ນຄວ້າເຖິງ ການມີສ່ວນຮ່ວມໃນການຮັບຜິດຊອບຕໍ່ສັງຄົມຂອງທຸລະກິດເຮືອນພັກໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ໂດຍມີຈຸດປະສົງໃນການຄົ້ນຄວ້າຄັ້ງນີ້ມີ 3 ຈຸດປະສົງຄື: 1) ສຶກສາການດຳເນີນງານຂອງທຸລະກິດບ້ານພັກໃນນະຄອນຫຼວງພະບາງ, 2) ສຶກສາການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມຂອງທຸລະກິດບ້ານພັກໃນນະຄອນຫຼວງພະບາງ ແລະ 3) ສຶກສາການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມມີຜົນຕໍ່ການດຳເນີນງານຂອງທຸລະກິດບ້ານພັກໃນນະຄອນຫຼວງພະບາງ ເພື່ອວິເຄາະຫາແນວທາງການສົ່ງເສີມຜູ້ປະກອບການທຸລະກິດບ້ານພັກໃນນະຄອນຫຼວງພະບາງ ເຂົ້າມາມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມເພີ່ມຂຶ້ນໃນອານາຄົດ.

## 2. ວິທີການຄົ້ນຄວ້າ

### 2.1 ເຄື່ອງມືໃນການເກັບຂໍ້ມູນ

ການຄົ້ນຄວ້າຄັ້ງນີ້ແມ່ນນຳໃຊ້ວິທີການສຶກສາຄົ້ນຄວ້າທາງປະລິມານ (Quantitative Research) ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ປະກອບດ້ວຍ: ເຄື່ອງມືດ້ານອຸປະກອນແມ່ນການນຳໃຊ້ຄອມພິວເຕີ ແລະ ນຳໃຊ້ໂປຼແກຼມສຳເລັດຮູບທາງສະຖິຕິ ແລະ ມີເຄື່ອງທີ່ນາໃຊ້ເຂົ້າໃນການເກັບລວບລວມຂໍ້ມູນແມ່ນແບບສອບຖາມ (Questionnaires) ໂດຍມີຂໍ້ຄຳຖາມທີ່ເປັນແບບເລືອກຕອບຕາມລາຍການ (Check List) ແລະ ມີຄຳຖາມເປັນແບບມາດຕາສ່ວນປະມານຄ່າ 5 ລະດັບຕາມຂອງ Likerts Scales ເຊິ່ງການສ້າງແບບສອບຖາມແມ່ນນຳໃຊ້ທິດສະດີການມີສ່ວນຮ່ວມ ແລະ ແນວຄິດປະເພດກິດຈະກຳຄວາມຮັບຜິດຊອບຕໍ່ສັງຄົມ ໂດຍມີຄ່າຄວາມໜ້າເຊື່ອຖື (Cronbach's Alpha) ເທົ່າກັບ 0.968 ແລະ ຄ່າ IOC ມີຄ່າສູງກວ່າ 0.8 ຂຶ້ນໄປ ໂດຍແບ່ງອອກເປັນ 4 ສ່ວນຄື:

- ສ່ວນທີ 1: ແມ່ນຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ
- ສ່ວນທີ 2: ແມ່ນຂໍ້ມູນສະພາບການປະກອບທຸລະກິດຂອງທຸລະກິດເຮືອນພັກໃນນະຄອນຫຼວງພະບາງ
- ສ່ວນທີ 3: ແມ່ນຂໍ້ມູນກ່ຽວກັບລະດັບການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມຂອງທຸລະກິດເຮືອນພັກໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ.
- ສ່ວນທີ 4: ແມ່ນຂໍ້ມູນກ່ຽວກັບຜົນການດຳເນີນງານ ຂອງທຸລະກິດທີ່ພັກແຮມ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ.

### 2.2 ປະຊາກອນ ແລະ ຂະໜາດກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ໃນການສຶກສາຄົ້ນຄວ້າຄັ້ງນີ້ແມ່ນ ຜູ້ປະກອບການ ຫຼື ຜູ້ບໍລິຫານທຸລະກິດເຮືອນພັກ ໃນເຂດພື້ນທີ່ນະຄອນຫຼວງພະບາງມີທັງໝົດຈຳນວນ 275 ແຫ່ງ (ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ, ຂະແໜງຄຸ້ມຄອງທຸລະກິດການທ່ອງທ່ຽວ ນະຄອນຫຼວງພະບາງ, 2023) ແລະ ໄດ້ກຳນົດຂະໜາດກຸ່ມຕົວຢ່າງແບບຮູ້ປະຊາກອນທີ່ແນ່ນອນເຊິ່ງກຳນົດທັງໝົດ 100% ຂອງປະຊາກອນ.

**2.3 ວິທີການເກັບກຳຂໍ້ມູນ**

ຜູ້ຄົ້ນຄວ້າໄດ້ແຈກແບບສອບຖາມໃຫ້ກຸ່ມຕົວຢ່າງທັງໝົດ 275 ສະບັບ ໂດຍເລີ່ມເກັບກຳຂໍ້ມູນ ແຕ່ເດືອນມິຖຸນາ 2023 - ມັງກອນ 2024 ເຊິ່ງສາມາດເກັບ ແລະ ລວບລວມຄືນໄດ້ທັງໝົດຈຳນວນ 250 ສະບັບ ເນື່ອງຈາກມີບາງທຸລະກິດໄດ້ປິດກິດຈະການລົງ.

**2.4 ການວິເຄາະຂໍ້ມູນ**

ການວິເຄາະຂໍ້ມູນແມ່ນນຳໃຊ້ສະຖິຕິພັນລະນາ ແລະ ສະຖິຕິອ້າງອີງ (Siljiru, 2010) ເປັນການວິເຄາະຊອກຫາຄ່າທາງສະຖິຕິຕ່າງໆ ເຊັ່ນ: ຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Std.Deviation) ແລະ ຄ່າສຳປະສິດສະຫະສຳພັນການຖົດຖອຍທະວີຄູນ (Multiple Regression Correlation Coefficient), ດ້ວຍການນຳໃຊ້ໂປຼແກມສຳເລັດຮູບທາງສະຖິຕິ SPSS version 22.0.

ຮູບທີ 1: ສະແດງກອບແນວຄິດຂອງການຄົ້ນຄວ້າ




**3. ຜົນໄດ້ຮັບ**

1) ການດຳເນີນງານຂອງທຸລະກິດບ້ານພັກໃນນະຄອນຫຼວງພະບາງ ສ່ວນໃຫຍ່ດຳເນີນທຸລະກິດດ້ວຍການຈົດທະບຽນແບບວິສາຫະກິດບຸກຄົນ (87.1%), ມີມູນຄ່າຈົດທະບຽນແມ່ນ 100 - 400 ລ້ານກີບ (33.1%), ໄລຍະເວລາດຳເນີນທຸລະກິດຢູ່ລະຫວ່າງ 8 -15 ປີ (41.9%), ຈ້າງແຮງງານ ຈຳນວນ 1 – 3 ຄົນ (80.6%), ດຳເນີນການໃຫ້ບໍລິການເສີມແມ່ນອາຫານ ແລະເຄື່ອງດື່ມ (46.8%), ມີລາຍຮັບສະເລ່ຍຕໍ່ເດືອນແມ່ນ 21 – 30 ລ້ານກີບ (40.3%), ໃຫ້ບໍລິການດ້ວຍການຈອງຜ່ານທາງຫນ້າຮ້ານ (72.6%), ກຸ່ມລູກຄ້າເປົ້າໝາຍແມ່ນນັກທ່ອງທ່ຽວຊາວຕ່າງປະເທດ (91.1%), ເຄື່ອງມືໃນການສົ່ງເສີມທາງການຕະຫຼາດແມ່ນດ້ວຍວິທີການຕິດຕັ້ງປ້າຍໂຄສະນາ (70.2%), ໃນການດຳເນີນທຸລະກິດສ່ວນໃຫຍ່ແມ່ນພົບບັນຫາທາງດ້ານຕົ້ນທຶນໝູນວຽນສູງ ແລະ ຮອງລົງມາແມ່ນການຂາດແຄນດ້ານແຮງງານ (47.6% ແລະ 30.6% ຕາມລຳດັບ). ສຳລັບຜົນການດຳເນີນງານຂອງທຸລະກິດ ໂດຍລວມແລ້ວປະສົບຜົນສຳເລັດໃນລະດັບສູງ ມີຄ່າສະເລ່ຍ 3.68, ໃນນີ້ມີຄວາມສຳເລັດຫຼາຍລຳດັບທຳອິດແມ່ນດ້ານ ການຕະຫຼາດ/ລູກຄ້າ ($\bar{X}$= 3.84), ຮອງລົງມາແມ່ນດ້ານການບໍລິຫານຈັດການທຸລະກິດ ($\bar{X}$= 3.73), ດ້ານການການຜະລິດ/ການບໍລິການ ($\bar{X}$= 3.70) ແລະ ສຸດທ້າຍແມ່ນດ້ານການເງິນ (ຜົນຕອບແທນຈາກການລົງທຶນ) ($\bar{X}$= 3.61).

2) ການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມຂອງທຸລະກິດບ້ານພັກໃນນະຄອນຫຼວງພະບາງ ສ່ວນໃຫຍ່ໄລຍະຜ່ານມາທຸລະກິດເຄີຍເຂົ້າຮ່ວມກິດຈະກຳຊ່ວຍເຫຼືອສັງຄົມຈຳນວນ 1 -2 ຄັ້ງຕໍ່ປີ ມີຈຳນວນ 132 ຄົນ ເທົ່າກັບ 52.8% ແລະ ປະເພດກິດຈະກຳຊ່ວຍເຫຼືອສັງຄົມແມ່ນເຂົ້າຮ່ວມກິດຈະກຳຮັບຜິດຊອບຕໍ່ສັງຄົມ ຫຼື ຊ່ວຍເຫຼືອສັງຄົມໃນປະເພດປະກອບສ່ວນງານບຸນປະເພນີ ມີຈຳນວນ 179 ແຫ່ງ ເທົ່າກັບ 76.2%, ໄດ້ຮັບຜົນປະໂຫຍດຈາກການຮັບຜິດຊອບຕໍ່ສັງຄົມແມ່ນມີຜົນປະໂຫຍດກ່ຽວກັບລູກຄ້າກັບຄືນມາໃຊ້ບໍລິການ ມີຈຳນວນ 156 ແຫ່ງ ເທົ່າກັບ 66.4%, ການເອົາໃຈໃສ່ຂອງພາກສ່ວນທີ່ກ່ຽວຂ້ອງຖືເປັນອຸປະສັກໃນການເຂົ້າມາມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມຂອງທຸລະກິດ ມີຈຳນວນ 95 ຄົນ ເທົ່າກັບ 38% ແລະ ປັດໄຈດ້ານຄວາມສາມາດດ້ານການເງິນຂອງທຸລະກິດເປັນປັດໄຈທີ່ມີຄວາມສຳຄັນໃນການເຂົ້າມາມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມຂອງທຸລະກິດ ມີຈຳນວນ 128 ຄົນ ເທົ່າກັບ 51.2% ໂດຍລວມແລ້ວທຸລະກິດມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມໃນລະດັບຫຼາຍ ($\bar{X}$= 3.82) ເຊິ່ງໃນນີ້ມີຄວາມຮັບຜິດຊອບຫຼາຍໃນລຳດັບທຳອິດໄດ້ແກ່: ດ້ານຄວາມຮັບຜິດຊອບຕໍ່ລູກຄ້າ/ຜູ້ບໍລິໂພກ ($\bar{X}$= 4.00), ຮອງລົງມາແມ່ນດ້ານການພັດທະນາຊຸມຊົນ ແລະ ສັງຄົມ ($\bar{X}$= 3.96), ຖັດມາແມ່ນດ້ານການປະກອບທຸລະກິດດ້ວຍຄວາມເປັນທຳ ($\bar{X}$= 3.85), ດ້ານການບໍລິຫານຄຸ້ມຄອງກິດຈະການທີ່ດີ ($\bar{X}$= 3.80) ແລະ ສຸດທ້າຍແມ່ນດ້ານການປົກປັກຮັກສາສິ່ງແວດລ້ອມ ($\bar{X}$= 3.496).

3) ປັດໄຈການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມແມ່ນມີຄວາມສຳພັນກັບຜົນການດຳເນີນງານດ້ານການຜະລິດ ຫຼື ການບໍລິການ ຢູ່ໃນລະດັບຕ່ຳ (R = 0.354) ແລະ ສາມາດອະທິບາຍ ຫຼື ພະຍາກອນການຜົນການດາເນີນງານດ້ານການຜະລິດ ຫຼື ການບໍລິການ ໂດຍລວມໄດ້ເຖິງ 12.5% ($R^2$ = 0.125) ສ່ວນທີ່ເຫຼືອອີກ 87.5% ແມ່ນເປັນຜົນຈາກຕົວປ່ຽນອື່ນໆ ທີ່ບໍ່ໄດ້ນຳມາວິເຄາະໃນການຄົ້ນຄວ້າຄັ້ງນີ້ ແລະ ມີພຽງ 1 ປັດໄຈທີ່ມີຄວາມສຳພັນກັນໃນລະດັບຄວາມສຳຄັນທາງສະຖິຕິ ທີ່ລະດັບ 0.05 ຄື: ປັດໄຈການມີສ່ວນຮ່ວມດ້ານການປົກປັກຮັກສາສິ່ງແວດລ້ອມ ($X_5$) ມີຄ່າ $\beta$ = 0.207 ໂດຍມີສົມຜົນຂອງການພະຍາກອນຄື: $Y_1$ = 1.864+ 0.207 $X_5$.

ປັດໄຈການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມແມ່ນມີຄວາມສຳພັນກັບຜົນການດຳເນີນງານດ້ານການບໍລິຫານ / ການຈັດການຢູ່ໃນລະດັບປານກາງ (R = 0.418) ແລະ ປັດໄຈການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມທັງ 5 ຕົວແມ່ນສາມາດອະທິບາຍ ຫຼື ພະຍາກອນການຜົນການດາເນີນງານດ້ານການບໍລິຫານ/ການຈັດການ ໂດຍລວມໄດ້ເຖິງ 17.5% ($R^2$ = 0.175) ສ່ວນທີ່ເຫຼືອອີກ 82.5% ແມ່ນເປັນຜົນຈາກຕົວປ່ຽນອື່ນໆ ທີ່ບໍ່ໄດ້ນຳມາວິເຄາະໃນການຄົ້ນຄວ້າຄັ້ງນີ້ ແລະ ມີ 2 ປັດໄຈທີ່ມີຄວາມສຳພັນກັນໃນລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ຄື: ປັດໄຈການມີສ່ວນຮ່ວມດ້ານການປະກອບທຸລະກິດ ດ້ວຍຄວາມເປັນທຳ ($X_2$) ແລະ ປັດໄຈການມີສ່ວນຮ່ວມດ້ານດ້ານການພັດທະນາຊຸມຊົນ ແລະ ສັງຄົມ ($X_4$) ມີຄ່າ □ = 0.226 ແລະ □ = 0.250 ຕາມລຳດັບ ໂດຍມີສົມຜົນຂອງການພະຍາກອນຄື: $Y_2$ = 1.340 + 0.226 $X_2$ + 0.250 $X_4$ .

ປັດໄຈການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມມີຄວາມສຳພັນກັບຜົນການດຳເນີນງານດ້ານການເງິນ ຢູ່ໃນລະດັບປານກາງ (R = 0.427) ແລະ ປັດໄຈການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມທັງ 5 ຕົວແມ່ນສາມາດອະທິບາຍ ຫຼື ພະຍາກອນການຜົນການດຳເນີນງານດ້ານການເງິນ ໂດຍລວມໄດ້ເຖິງ 18.2% ($R^2$ = 0.182) ສ່ວນທີ່ເຫຼືອອີກ 81.8% ແມ່ນເປັນຜົນຈາກຕົວປ່ຽນອື່ນໆ ທີ່ບໍ່ໄດ້ນຳມາວິເຄາະໃນການຄົ້ນຄວ້າຄັ້ງນີ້ ແລະ ມີ 2 ປັດໄຈທີ່ມີຄວາມສຳພັນກັນໃນລະດັບຄວາມສຳຄັນທາງສະຖິຕິ 0.05 ຄື: ດ້ານການມີສ່ວນຮ່ວມໃນການພັດທະນາຊຸມຊົນ ແລະ ສັງຄົມ ($X_4$) ແລະ ດ້ານການມີສ່ວນຮ່ວມໃນການປົກປັກຮັກສາສິ່ງແວດລ້ອມ ($X_5$) ໂດຍມີຄ່າ $\beta$ = 0.213 ແລະ 0.261 ຕາມລຳດັບ ໂດຍມີສົມຜົນຂອງການພະຍາກອນຄື: $Y_3$ = 1.350 + 0.213 $X_4$ + 0.261 $X_5$ .

ປັດໄຈການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມມີຄວາມສຳພັນກັບຜົນການດຳເນີນງານດ້ານການຕະຫຼາດ ຢູ່ໃນລະດັບຕ່ຳ (R = 0.347) ແລະ ປັດໄຈການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມທັງ 5 ຕົວແມ່ນສາມາດອະທິບາຍ ຫຼື ພະຍາກອນການຜົນການດຳເນີນງານດ້ານການຕະຫຼາດໂດຍລວມໄດ້ເຖິງ 12.5% ($R^2$ = 0.121) ສ່ວນທີ່ເຫຼືອອີກ 87.9% ແມ່ນເປັນຜົນຈາກຕົວປ່ຽນອື່ນໆ ທີ່ບໍ່ໄດ້ນຳມາວິເຄາະໃນການຄົ້ນຄວ້າຄັ້ງນີ້ ແລະ ມີ 1 ປັດໄຈທີ່ມີຄວາມສຳພັນກັນໃນລະດັບຄວາມສຳຄັນທາງສະຖິຕິ ຄື: ດ້ານການພັດທະນາຊຸມຊົນ ແລະ ສັງຄົມ ($X_4$) ມີຄ່າ $\beta = 0.327$ ໂດຍມີສົມຜົນຂອງການພະຍາກອນຄື: $Y_4 = 1.696 + 0.327 X_4$.

ປັດໄຈການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມທັງໝົດ 5 ຕົວ ແມ່ນມີຄວາມສຳພັນກັບຜົນການດາເນີນງານໂດຍລວມ ຢູ່ໃນລະດັບປານກາງ (R = 0.458) ແລະ ປັດໄຈການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມທັງ 5 ຕົວແມ່ນສາມາດອະທິບາຍ ຫຼື ພະຍາກອນການຜົນການດາເນີນງານໂດຍລວມໄດ້ເຖິງ 21% ($R^2$ = 0.210) ສ່ວນທີ່ເຫຼືອອີກ 79% ແມ່ນເປັນຜົນຈາກຕົວປ່ຽນອື່ນໆ ແລະ ມີ 3 ປັດໄຈທີ່ມີຄວາມສຳພັນກັນໃນລະດັບຄວາມສຳຄັນທາງສະຖິຕິ ຄື: ດ້ານການປະກອບທຸລະກິດດ້ວຍຄວາມເປັນທຳ ($X_2$), ດ້ານການພັດທະນາຊຸມຊົນ ແລະ ສັງຄົມ ($X_4$) ແລະ ດ້ານການປົກປັກຮັກສາສິ່ງແວດລ້ອມ ($X_5$) ມີຄ່າ $\beta$ ເທົ່າ 0.144, 0.242 ແລະ ເທົ່າ 0.169 ຕາມລຳດັບ ໂດຍມີສົມຜົນຂອງການພະຍາກອນຄື: $Y = 1.563 + 0.144 X_2 + 0.242 X_4 + 0.169 X_5$.

## 4. ວິພາກຜົນ

ຈາກການຄົ້ນຄວ້າຄັ້ງນີ້, ຜູ້ຄົ້ນຄ້ວາໄດ້ພົບເຫັນຜົນປະເດັນທີ່ສຳຄັນ ເຊິ່ງສາມາດອະພິປາຍຜົນໄດ້ດັ່ງລຸ່ມນີ້:

ສະພາບຜົນການດຳເນີນງານຂອງທຸລະກິດບ້ານພັກໃນນະຄອນຫຼວງພະບາງ ປະກອບການທຸລະກິດບ້ານພັກໃນເຂດນະຄອນຫຼວງພະບາງ ໂດຍລວມແລ້ວມີຜົນການດຳເນີນງານໃນລະດັບຫຼາຍ ເຊິ່ງໃນນີ້ຜົນການດຳເນີນງານທີ່ມີຄ່າສະເລ່ຍສູງກວ່າໝູ່ຈັດອັນດັບໄດ້ແກ່: ດ້ານການຕະຫຼາດ, ດ້ານການບໍລິຫານ ຫຼື ການຈັດການ, ຖັດມາແມ່ນດ້ານການຜະລິດ ຫຼື ການໃຫ້ບໍລິການ ແລະ ດ້ານການເງິນ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Hoongsengpha et al (2018) ເຊິ່ງໄດ້ສະແດງໃຫ້ເຫັນວ່າຜູ້ປະກອບການໃນທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງ ໂດຍລວມແມ່ນມີຄວາມສຳເລັດຂອງການດຳເນີນທຸລະກິດຂະໜາດນ້ອຍໃນລະດັບຫຼາຍ ໃນນີ້ຄວາມສຳເລັດຫຼາຍກ່ວາໝູ່ແມ່ນທາງດ້ານການບໍລິຫານຈັດການພາຍໃນຂອງທຸລະກິດ, ຮອງລົງມາແມ່ນດ້ານລູກຄ້າຂອງທຸລະກິດ, ຖັດລົງມາແມ່ນດ້ານການຮຽນຮູ້ ແລະ ການເຕີບໂຕຂອງທຸລະກິດ ແລະ ສຸດທ້າຍແມ່ນດ້ານຜົນຕອບແທນຂອງທຸລະກິດ, ສອດຄ່ອງກັບ Chahmavong (2021) ໂດຍພົບວ່າຄວາມສຳເລັດໃນການດຳເນີນທຸລະກິດຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງໂດຍລວມແມ່ນມີຄວາມສຳເລັດຢູ່ໃນລະດັບຫຼາຍ ໄດ້ແກ່: ດ້ານລູກຄ້າ, ດ້ານຂະບວນການບໍລິຫານພາຍໃນ, ດ້ານການຮຽນຮູ້ ແລະ ດານເຕີບໂຕຂອງືອົງກອນ, ດ້ານການເງິນ ແລະ Heonsawang & Jewjinda (2020) ໄດ້ຊີ້ໃຫ້ເຫັນປະເດັນສຳຄັນຄືລະດັບຄວາມສຳເລັດຂອງຜູ້ປະກອບການໃນການປະກອບທຸລະກິດຮ້ານອາຫານໄທໃນລັດເວີຈິເນຍ ປະເທດສະຫະລັດອາເມລິກາ ແມ່ນມີຄວາມສຳເລັດຈາກຄວາມພໍໃຈຂອງຜູ້ໃຊ້ບໍລິການໃນລະດັບຫຼາຍ ແລະ ສອດຄ່ອງກັບຜົນການຄົ້ນຄວ້າຂອງ Lattanakone (2023) ໄດ້ຄົ້ນພົບວ່າລະດັບຄວາມສາມາດໃນການດຳເນີນງານຂອງການປະກອບທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງ ແມ່ນມີລະດັບດີຫຼາຍ ໄດ້ແກ່: ດ້ານການຜະລິດ/ການບໍລິການ ແລະ ການບໍລິຫານຈັດການ, ສ່ວນດ້ານການເງິນ ແລະ ດ້ານການຕະຫຼາດແມ່ນມີຄວາມສາມາດໃນລະດັບດີ.

ການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມຂອງທຸລະກິດບ້ານພັກໃນນະຄອນຫຼວງພະບາງ ພົບວ່າໃຫ້ການຊ່ວຍເຫຼືອສັງຄົມຈຳນວນ 1 - 2 ຄັ້ງຕໍ່ປີ ໂດຍເຂົ້າຮ່ວມກິດຈະກຳຮັບຜິດຊອບຕໍ່ສັງຄົມ ຫຼື ຊ່ວຍເຫຼືອສັງຄົມປະເພດປະກອບສ່ວນງານບຸນປະເພນີ, ຄວາມຮູ້ສຶກຂອງຜູ້ປະກອບ

ການທີ່ມີຕໍ່ຜົນປະໂຫຍດທີ່ໄດ້ຮັບຈາກການປະກອບສ່ວນຮັບຜິດຊອບສັງຄົມແມ່ນທຸລະກິດມີຜົນປະໂຫຍດກ່ຽວກັບລູກຄ້າກັບຄືນມາໃຊ້ບໍລິການ, ເຊິ່ງໂດຍລວມແລ້ວທຸລະກິດມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມໃນລະດັບຫຼາຍ ໄດ້ແກ່: ດ້ານການບໍລິຫານຄຸ້ມຄອງທຸລະກິດທີ່ດີ, ການປະກອບກິດຈະການດ້ວຍຄວາມເປັນທໍາຂອງອົງກອນ, ດ້ານຄວາມຮັບຜິດຊອບຕໍ່ລູກຄ້າ, ການມີສ່ວນຮ່ວມພັດທະນາຊຸມຊົນ ແລະ ສັງຄົມ ແລະ ດ້ານການປົກປັກຮັກສາສິ່ງແວດລ້ອມ ໂດຍມີຄວາມສອດຄ່ອງກັບແນວຄິດຂອງ Kotler & Lee (2005) ໄດ້ຈໍາແນກຄວາມຮັບຜິດຊອບຕໍ່ສັງຄົມຂອງອົງກອນ (CSR) ອອກເປັນ 6 ປະເພດກິດຈະກໍາໄດ້ແກ່: ການສົ່ງເສີມການຮັບຮູ້ບັນຫາທາງສັງຄົມ, ການຕະຫຼາດທີ່ກ່ຽວໂຍງກັບປະເດັນທາງສັງຄົມ, ການຕະຫຼາດເພື່ອມຸ້ງແກ້ໄຂບັນຫາສັງຄົມ, ການບໍລິຈາກເພື່ອການກຸສົນ, ການອາສາຊ່ວຍເຫຼືອຊຸມຊົນ ແລະ ກິດຈະກໍາການປະກອບທຸລະກິດທີ່ຮັບຜິດຊອບຕໍ່ສັງຄົມ, ສອດຄ່ອງກັບແນວຄິດຂອງ Institute of Social Business, (2009) ເຊິ່ງໄດ້ກໍານົດຫຼັກແນວທາງໃນການຮັບຜິດຊອບຕໍ່ສັງຄົມຂອງທຸລະກິດໄວ້ 7 ແນວທາງຄື: 1) ການບໍລິຫານຄຸ້ມຄອງອົງກອນ, 2) ສິດທິມະນຸດ, 3) ການປະຕິບັດແຮງງານ, 4) ສິ່ງແວດລ້ອມ, 5) ການປະຕິບັດທີ່ຍຸດຕິທໍາ, 6) ບັນຫາຜູ້ບໍລິໂພກ ແລະ 7) ການມີສ່ວນຮ່ວມ ແລະ ການພັດທະນາຊຸມຊົນ ແລະ ສອດຄ່ອງກັບຜົນການຄົ້ນຄວ້າຂອງ Kettapha (2019) ໄດ້ຊີ້ໃຫ້ເຫັນວ່າອົງປະກອບຂອງຄວາມຮັບຜິດຊອບຕໍ່ສັງຄົມໃນທຸລະກິດໂຮງແຮມໄທຈາກພາກໃຕ້ ປະກອບດ້ວຍການດໍາເນີນງານທາງດ້ານນະໂຍບາຍທີ່ມຸ້ງເນັ້ນເປົ້າໝາຍໃນໄລຍະຍາວ ໂດຍມີການເຊື່ອມໂຍງກັນລະຫວ່າງຂະບວນການທາງທຸລະກິດກັບການດໍາເນີນງານດ້ານຄວາມຮັບຜິດຊອບຕໍ່ສັງຄົມ ແລະ ເນັ້ນການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍກຸ່ມຕ່າງໆ ແລະ ຮູບແບບຄວາມຮັບຜິດຊອບຕໍ່ສັງຄົມແມ່ນປະກອບມີ 3 ດ້ານຄື: ດ້ານການພັດທະນາເສດຖະກິດຂອງອົງກອນ, ດ້ານເສີມສ້າງຄວາມເຂັ້ມແຂງທາງສັງຄົມ ແລະ ດ້ານການເປັນມິດຕໍ່ສິ່ງແວດລ້ອມ ແລະ ຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ Petchdee (2021) ໂດຍສະແດງໃຫ້ເຫັນປະເດັນສໍາຄັນຄືການດໍາເນີນກິດຈະກໍາການຮັບຜິດຊອບຕໍ່ສັງຄົມຂອງເຂດປະກອບການອຸດສາຫະກໍາ WHA ສະຫຼະບູລີ ໃນດ້ານສັງຄົມ ແມ່ນຢູ່ໃນລະດັບຫຼາຍ ໄດ້ແກ່: ການໃຫ້ການຊ່ວຍເຫຼືອແກ່ປູ້ປະສົບໄພທາງທໍາມະຊາດ ໄພໜາວ ແລະ ອຸທຸກກະໄພ ແລະ ໂລກລະບາດ, ການຊ່ວຍພັດທະນາຊຸມຊົນຜ່ານຄ່າຍອາສາພັດທະນາຊຸມຊົນທີ່ຢູ່ໃນສະຖາບັນການສຶກສາ, ການສະໜັບສະໜູນໂຄງການສ້າງອາຄານຮຽນ ແລະ ຫ້ອງສະມຸດຕະຫຼອດເຖິງການມອບທຶນການສຶກສາ, ການສະໜັບສະໜູນອົງການກຸສົນຕ່າງໆ ເຊັ່ນ: ໂຮງຮຽນ, ມູນລະນິທິ, ພັດທະນາໂຄງການໃໝ່ໆເພື່ອປັບປຸງຄຸນນະພາບຊີວິດຂອງຄົນໃນຊຸມຊົນສະໝໍ່າສະເໝີ ແລະ ມີການເຄົາລົບ ປະຕິບັດຕາມກົດລະບຽບກົດໝາຍຢ່າງເຄັ່ງຄັດ ແລະ ຫຼີກກລ້ຽງການໃຊ້ຊ່ອງວ່າງກົດໝາຍໃນການສະແຫວງຫາຜົນປະໂຫຍດທາງທຸລະກິດ ແລະສໍາລັບກິດຈະກໍາຮັບຜິດຊອບຕໍ່ສິ່ງແວດລ້ອມ ແມ່ນຢູ່ໃນລະດັບຫຼາຍເຊັ່ນກັນ ໄດ້ແກ່: ການສະໜັບສະໜູນກິດຈະກໍາອານຸລັກສິ່ງແວດລ້ອມຕ່າງໆ ເຊັ່ນ: ປູກຕົ້ນໄມ້ ແລະ ປ່ອຍສັດປ່າ, ການປູກຈິດສໍານຶກໃນການດໍາເນີນງານທີ່ມຸ່ງເນັ້ນການເຕີບໂຕທາງທຸລະກິດຄວບຄູ່ກັບຄວາມຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ແລະ ການຮັບຜິດຊອບໂດຍການຜະລິດສິນຄ້າ ແລະ ບໍລິການທີ່ມີຄຸນນະພາບອອກສູ່ສັງຄົມ. ສະນັ້ນ, ທາງພະແນກການທີ່ກ່ຽວຂ້ອງກັບການວາງແຜນພັດທະນາສັງຄົມ ຄວນສົ່ງເສີມ ແລະ ລະດົມໃຫ້ຫົວໜ່ວຍທຸລະກິດ ເຮືອນພັກ ເຂົ້າມາມີສ່ວນຮ່ວມໃນການຮັບຜິດຊອບຕໍ່ສັງຄົມໃຫ້ຫຼາຍຂຶ້ນ ໂດຍສ້າງໂຄງການທີ່ກ່ຽວກັບການຊ່ວຍເຫຼືອສັງຄົມໃຫ້ຫຼາຍຂຶ້ນ ແລະ ຄວນຈັດງານສໍາມະນາເພື່ອເຜີຍແຜ່ຄວາມຮູ້ ຄວາມເຂົ້າໃຈຕໍ່ການຮັບຜິດຊອບຕໍ່ສັງຄົມ ໃຫ້ພາກສ່ວນທຸລະກິດເຮືອນພັກ ແລະ ທຸລະກິດອື່ນໆ ໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບຜົນປະໂຫຍດທີ່ທາງທຸລະກິດຈະໄດ້ຮັບຈາກການສະແດງຄວາມຮັບຜິດຊອບຕໍ່ສັງຄົມໂດຍສະເພາະ

ແມ່ນກິດຈະກຳການສະແດງຄວາມຮັບຜິດຊອບປົກປັກຮັກສາສິ່ງແວດລ້ອມ, ການປະກອບທຸລະກິດດ້ວຍຄວາມເປັນທຳ ແລະ ການພັດທະນາຊຸມຊົນ ແລະ ສັງຄົມເຊິ່ງຜົນການສຶກສາພົບວ່າການຮັບຜິດຊອບຕໍ່ສັງຄົມມີຜົນສິ່ງໃຫ້ຜົນການດຳເນີນງານຂອງທຸລະກິດສູງຂຶ້ນ ເປັນຕົ້ນແມ່ນດ້ານການເງິນ, ດ້ານການຕະຫຼາດ, ດ້ານການບໍລິຫານ ແລະ ດ້ານການຜະລິດ ຫຼື ການໃຫ້ບໍລິການ ເຊິ່ງປັດໄຈເຫຼົ່ານີ້ຈະຊ່ວຍກະຕຸ້ນການສ້າງຈິດສຳນຶກຕໍ່ກັບການຈັດຕັ້ງປະຕິບັດຢ່າງຍືນຍົງໃນອານາຄົດ ແລະ ທາງພາກສ່ວນທີ່ກ່ຽວຂ້ອງຄວນມີນະໂຍບາຍ ແລະ ໃຊ້ມາດຕະການການໃຫ້ລາງວັນຍ້ອງຍໍຊົມເຊີຍ ຕໍ່ກັບທຸລະກິດທີ່ມີຜົນງານໂດດເດັ່ນໃນການຮັບຜິດຊອບຕໍ່ສັງຄົມ ເພື່ອກະຕຸ້ນການເປັນແບບຢ່າງ ແລະ ສ້າງແຮງຈູງໃຈໃນການປະຕິບັດການຮັບຜິດຊອບຕໍ່ສັງຄົມຕໍ່ໄປຢ່າງຍືນຍົງ.

ການຮັບຜິດຊອບຕໍ່ສັງຄົມໃນດ້ານການມີສ່ວນຮ່ວມ ແລະ ການພັດທະນາຊຸມຊົນ ແມ່ນສິ່ງຜົນ ຫຼື ມີອິດທິພົນຕໍ່ຄວາມສຳເລັດໃນດ້ານການເງິນ / ຜົນຕອບແທນຂອງທຸລະກິດເຮືອນພັກໃນນະຄອນຫຼວງພະບາງ ເຊິ່ງມີຄວາມສອດຄ່ອງກັບຜົນການຄົ້ນຄວ້າຂອງ Heonsawang & Jewjinda (2020) ໄດ້ຊີ້ໃຫ້ເຫັນປະເດັນສຳຄັນຄື ປັດໄຈພື້ນຖານຂອງຄວາມສຳເລັດໃນການປະກອບທຸລະກິດຮ້ານອາຫານໄທໃນລັດເວີຈິເນຍ ແມ່ນດ້ານແຮງງານ, ດ້ານການເງິນ, ດ້ານວັດຖຸດິບ ແລະ ດ້ານເຄື່ອງມືອຸປະກອນ ແມ່ນມີອິດທິພົນ ຫຼື ສິ່ງຜົນຕໍ່ຄວາມສຳເລັດໃນການປະກອບທຸລະກິດຮ້ານອາຫານໄທໃນລັດເວີຈິເນຍ.

ການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມດ້ານການປົກປັກຮັກສາສິ່ງແວດລ້ອມ ແລະ ການຮັບຜິດຊອບດ້ານລູກຄ້າ/ຜູ້ບໍລິໂພກ ແມ່ນສິ່ງຜົນ ຫຼື ມີອິດທິພົນຕໍ່ຜົນການດາເນີນງານໃນດ້ານການຕະຫຼາດ ຂອງທຸລະກິດເຮືອນພັກໃນນະຄອນຫຼວງພະບາງ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Kanchanamusic (2011) ໄດ້ສຶກສາ ການສ້າງກິດຈະກຳຄວາມຮັບຜິດຊອບຕໍ່ສັງຄົມທີ່ມີຜົນຕໍ່ການຕັດສິນໃຈເລືອກຊື້ສິນຄ້າ ແລະ ບໍລິການຂອງຜູ້ບໍລິໂພກໃນເຂດກຸງເທບ ເຊິ່ງສະແດງໃຫ້ເຫັນວ່າ: ການສ້າງກິດຈະກຳຄວາມຮັບຜິດຊອບຕໍ່ສັງຄົມ ດ້ານການຮ່ວມພັດທະນາຊຸມຊົນ ແລະ ສັງຄົມຂອງອົງກອນແມ່ນສິງຜົນຕໍ່ການຕັດສິນໃຈເລືອກຊື້ສິນຄ້າ ແລະ ບໍລິການຂອງຜູ້ບໍລິໂພກໃນເຂດກຸງເທບຫຼາຍທີ່ສຸດ ຮອງລົງມາແມ່ນດ້ານການຮັກສາສິ່ງແວດລ້ອມຂອງອົງກອນ, ດ້ານຄວາມຮັບຜິດຊອບຕໍ່ຜູ້ບໍລິໂພກ ແລະ ດ້ານການຄຸ້ມຄອງທຸລະກິດທີ່ດີ ທີ່ມີລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ແລະ ສອດຄ່ອງກັບ SinKhow (2013) ໄດ້ສະແດງໃຫ້ເຫັນວ່າໃນດ້ານບໍລິສັດມີການເຮັດການຕະຫຼາດ ແລະ ປະຊາສຳພັນທີ່ດີ, ມີບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ ເຮັດໃຫ້ຜູ້ບໍລິໂພກມີຄວາມມັກໃນພາບລັກຂອງບໍລິສັດໄທນ້ຳທິບ ຈຳກັດ, ດ້ານຄວາມຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມແມ່ນຈະມີຄວາມສຳພັນກັບພາບລັກບໍລິສັດໃນທຸກໆດ້ານຄື: ດ້ານຜູ້ບໍລິໂພກ, ດ້ານຊຸມຊົນ ແລະ ສັງຄົມ, ແລະ ຍັງມີຄວາມສອດຄ່ອງກັບ Aranyamartteetat (2020) ໄດ້ສຶກສາຄວາມຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມຂອງອົງກອນທີ່ມີຜົນຕໍ່ການຕັດສິນໃຈຊື້ສິນຄ້າຂອງຜູ້ບໍລິໂພກໃນເຂດກຸງເທບມະຫານະຄອນ ເຊິ່ງຜົນຂອງການທົດສອບສົມມຸດຖານພົບວ່າ: ຄວາມຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ເປັນຕົ້ນແມ່ນດ້ານການຄຸ້ມຄອງເບິ່ງແຍງທຸລະກິດທີ່ດີ, ດ້ານການຮ່ວມພັດທະນາຊຸມຊົນ ແລະ ສັງຄົມ, ດ້ານນະວັດຕະກຳ ແລະ ການເຜີຍແຜ່ນະວັດຕະກຳຈາກການດຳເນີນງານ, ຄວາມຮັບຜິດຊອບຕໍ່ສັງຄົມ ແລະ ດ້ານການສ້າງລາຍງານດ້ານສັງຄົມ ແລະ ສິ່ງແວດລ້ອມສິ່ງຜົນຕໍ່ການຕັດສິນໃຈຊື້ສິນຄ້າຂອງຜູ້ບໍລິໂພກໃນເຂດກຸງເທບ.

ການຮັບຜິດຊອບຕໍ່ສັງຄົມໃນດ້ານຄວາມຮັບຜິດຊອບຕໍ່ລູກຄ້າ/ຜູ້ບໍລິໂພກແມ່ນສິ່ງຜົນ ຫຼື ມີອິດທິພົນຕໍ່ຜົນສຳເລັດໃນດ້ານການຜະລິດ/ການບໍລິການຂອງທຸລະກິດເຮືອນພັກໃນນະຄອນຫຼວງພະບາງ ເຊິ່ງມີຄວາມສອດຄ່ອງກັບຜົນການຄົ້ນຄວ້າຂອງ Heonsawang & Jewjinda (2020) ໄດ້ຊີ້ໃຫ້ເຫັນປະເດັນສຳຄັນຄື ປັດໄຈສິ່ງແວດລ້ອມຂອງຄວາມສຳເລັດໃນການປະກອບທຸລະກິດຮ້ານອາຫານ

ແມ່ນດ້ານການສະໜັບສະໜູນຈາກທາງສັງຄົມຢູ່ໃນລະດັບຫຼາຍ, ດ້ານການສະໜັບສະໜູນຈາກໜ່ວຍງານລັດ, ດ້ານການສະໜັບສະໜູນຈາກພາກເອກະຊົນຢູ່ໃນລະດັບຫຼາຍ ແລະ ດ້ານການສະໜັບສະໜູນຈາກຜູ້ນຳຊຸມຊົນຢູ່ໃນລະດັບຫຼາຍ.

ການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມດ້ານການມີສ່ວນຮ່ວມພັດທະນາຊຸມຊົນ ແລະ ສັງຄົມ ແລະ ການຮັບຜິດຊອບດ້ານລູກຄ້າ/ຜູ້ບໍລິໂພກ ແມ່ນສິ່ງຜົນ ຫຼື ມີອິດທິພົນຕໍ່ຜົນການດຳເນີນງານໃນດ້ານການບໍລິຫານຈັດການທຸລະກິດ ຄວາມສອດຄ່ອງກັບຜົນການຄົ້ນຄວ້າຂອງ Songsiri (2015) ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການດຳເນີນງານຄວາມຮັບຜິດຊອບຕໍ່ສັງຄົມ: ກໍລະນີສຶກສາບໍລິສັດ ໄອອາພີຊີ ຈຳກັດ (ມະຫາຊົນ) ໄດ້ສະແດງໃຫ້ເຫັນວ່າ: ປັດໄຈທີ່ສົ່ງຜົນຕໍ່ການດຳເນີນງານຄວາມຮັບຜິດຊອບຕໍ່ສັງຄົມ ດ້ານການບໍລິຫານຈັດການ ໄດ້ແກ່: ນະໂຍບາຍ, ບຸກຄະລາກອນ, ງົບປະມານ ແລະ ການຕິດຕາມກວດສອບ ແລະ ປະເມີນຜົນ , ດ້ານຜູ້ມີສ່ວນໄດ້ສ່ວນເສຍໄດ້ແກ່: ການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍ ແລະ ຄວາມພໍໃຈຂອງຜູ້ມີສ່ວນໄດ້ສ່ວນເສຍ, ດ້ານການຮຽນຮູ້ ແລະ ການພັດທະນາໜ່ວຍງານໄດ້ແກ່: ການປັບປຸງຂະບວນການເຮັດວຽກ ແລະ ການໃຊ້ເຕັກໂນໂລຊີໃນການດຳເນີນງານ ສ່ວນສຸດທ້າຍແມ່ນດ້ານປະສິດທິຜົນໂດຍແບ່ງເປັນ 3 ດ້ານ ໄດ້ແກ່: ການຄອບຄຸມກັບຄວາມຕ້ອງການຂອງຜູ້ມີສ່ວນໄດ້ສ່ວນເສຍ, ປະໂຫຍດຂອງຜູ້ມີສ່ວນໄດ້ສ່ວນເສຍແມ່ນໄດ້ຮັບຈາກການດຳເນີນງານຄວາມຮັບຜິດຊອບຕໍ່ສັງຄົມ ແລະ ຄວາມສຳພັນລະຫວ່າງຊຸມຊົນກັບບໍລິສັດ ພາຍຫຼັງການເຮັດກິດຈະກຳຮ່ວມກັນ.

ປັດໄຈການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມຂອງທຸລະກິດບ້ານພັກໃນນະຄອນຫຼວງພະບາງໃນດ້ານການປະກອບທຸລະກິດດ້ວຍຄວາມເປັນທຳ, ດ້ານການພັດທະນາຊຸມຊົນ ແລະ ສັງຄົມ ແລະ ດ້ານການປົກປັກຮັກສາສິ່ງແວດລ້ອມ ແມ່ນສິ່ງຜົນທາງບວກກັບຜົນການດຳເນີນງານໂດຍລວມ ເຊິ່ງສອດຄ່ອງກັບ SinKhow (2013) ໄດ້ສຶກສາຄວາມຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມທີ່ສົ່ງຜົນຕໍ່ພາບລັກຂອງບໍລິສັດໄທນ້ຳທິບ ຈຳກັດ ຈັງຫວັດປະທຸມທານີ. ໂດຍສະແດງໃຫ້ເຫັນເຖິງປະເດັນສຳຄັນຄື: ຜູ້ຕອບແບບສອບຖາມມີຄວາມຄິດເຫັນຕໍ່ຄວາມຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມຂອງບໍລິສັດໄທນ້ຳທິບ ຈຳກັດໃນດ້ານຜູ້ບໍລິໂພກມີຄວາມຮັບຮູ້ໃນລະດັບດີໃນດ້ານກິດຈະກຳຄວາມຮັບຜິດຊອບຕໍ່ສັງຄົມຂອງບໍລິສັດໃນດ້ານຊຸມຊົນ ແລະ ສັງຄົມ, ດ້ານສິ່ງແວດລ້ອມ, ດ້ານຄວາມຄິດເຫັນກ່ຽວກັບພາບລັກຂອງອົງກອນຂອງບໍລິສັດ ໄທນ້ຳທິບຈຳກັດ ໃນດ້ານບໍລິສັດເປັນອົງກອນທີ່ດາເນີນທຸລະກິດທີ່ປະສົບຄວາມສຳເລັດ, ເປັນບໍລິສັດທີ່ດາເນີນການຄ້າທີ່ເປັນທຳກັບຜູ້ບໍລິໂພກ, ບໍລິສັດມີສ່ວນຮ່ວມໃນການພັດທະນາຊຸມຊົນ ແລະ ການດາເນີນກິດຈະກຳຄວາມຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມແມ່ນມີຜົນຕໍ່ການໃຊ້ຜະລິດຕະພັນຂອງບໍລິສັດ, ດ້ານຄວາມຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ມີຄວາມສຳພັນກັບພາບລັກບໍລິສັດໃນທຸກໆດ້ານ ຄື: ດ້ານຜູ້ບໍລິໂພກ, ດ້ານຊຸມຊົນ ແລະ ສັງຄົມ, ດ້ານສິ່ງແວດລ້ອມ.ສະນັ້ນ, ທາງຜູ້ປະກອບການທຸລະກິດເຮືອນພັກຄວນໃຫ້ຄວາມສຳຄັນ ແລະ ເຂົ້າມາມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມຫຼາຍຂຶ້ນໂດຍສະເພາະຮັບຜິດຊອບໃນການປົກປັກຮັກສາສິ່ງແວດລ້ອມ, ການປະກອບທຸລະກິດດ້ວຍຄວາມເປັນທຳ ແລະ ປັດໄຈການມີສ່ວນຮ່ວມໃນການພັດທະນາຊຸມຊົນ ແລະ ສັງຄົມໃຫ້ຫຼາຍຂຶ້ນໂດຍມີການກຳນົດເປັນແຜນຍຸດທະສາດ ແລະ ນະໂຍບາຍທີ່ຊັດເຈນໃນການຈັດຕັ້ງປະຕິບັດ ເພາະຈະເຮັດໃຫ້ຜົນການດາເນີນງານຂອງທຸລະກິດສູງຂຶ້ນໃນດ້ານການຜະລິດ ຫຼື ການບໍລິການ, ດ້ານການເງິນ ແລະ ດ້ານການຕະຫຼາດຂອງທຸລະກິດເຮືອນພັກ.

## 5. ສະຫຼຸບ

ຜົນການດຳເນີນງານຂອງທຸລະກິດໂດຍລວມແລ້ວປະສົບຜົນສຳເລັດໃນລະດັບສູງ, ໃນນີ້ມີຄວາມສຳເລັດຫຼາຍລຳດັບທຳອິດແມ່ນດ້ານການຕະຫຼາດ/ລູກຄ້າ, ຮອງລົງມາແມ່ນດ້ານການບໍລິຫານຈັດການທຸລະກິດ, ດ້ານການຜະລິດການບໍລິການ ແລະ ສຸດທ້າຍແມ່ນດ້ານການເງິນ.

ການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມຂອງທຸລະກິດບ້ານພັກໃນນະຄອນຫຼວງພະບາງ ພົບວ່າໄລຍະຜ່ານມາ

ທຸລະກິດເຄີຍເຂົ້າຮ່ວມກິດຈະກຳຊ່ວຍເຫຼືອສັງຄົມຈຳນວນ 1 - 2 ຄັ້ງຕໍ່ປີ ແລະ ປະເພດກິດຈະກຳຊ່ວຍເຫຼືອສັງຄົມ ແມ່ນປະເພດປະກອບສ່ວນງານບຸນປະເພນີ, ຄວາມຮູ້ສຶກ ຂອງຜູ້ປະກອບການທີ່ມີຕໍ່ຜົນປະໂຫຍດທີ່ໄດ້ຮັບຈາກການ ປະກອບສ່ວນຮັບຜິດຊອບສັງຄົມແມ່ນທຸລະກິດມີຜົນ ປະໂຫຍດກ່ຽວກັບລູກຄ້າກັບຄືນມາໃຊ້ບໍລິການ, ການ ເອົາໃຈໃສ່ຂອງພາກສ່ວນທີ່ກ່ຽວຂ້ອງຖືເປັນອຸປະສັກໃນ ການເຂົ້າມາມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມຂອງທຸລະ ກິດ ແລະ ປັດໄຈດ້ານຄວາມສາມາດດ້ານການເງິນຂອງ ທຸລະກິດເປັນປັດໄຈທີ່ມີຄວາມສຳຄັນໃນການເຂົ້າມາມີ ສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມຂອງທຸລະກິດ ໂດຍລວມ ແລ້ວທຸລະກິດມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມໃນລະດັບ ຫຼາຍ ເຊິ່ງໃນນີ້ມີຄວາມຮັບຜິດຊອບຫຼາຍໃນລຳດັບທຳອິດ ໄດ້ແກ່: ດ້ານການບໍລິຫານຄຸ້ມຄອງກິດຈະການທີ່ດີ, ການ ປະກອບກິດຈະການດ້ວຍຄວາມເປັນທຳ, ດ້ານຄວາມ ຮັບຜິດຊອບຕໍ່ລູກຄ້າ/ຜູ້ບໍລິໂພກ ແລະ ດ້ານການມີສ່ວນ ຮ່ວມພັດທະນາຊຸມຊົນ ແລະ ສັງຄົມ ແລະ ດ້ານການມີ ສ່ວນຮ່ວມໃນການປົກປັກຮັກສາສິ່ງແວດລ້ອມ.

ການມີສ່ວນຮ່ວມຮັບຜິດຊອບຕໍ່ສັງຄົມດ້ານການປົກ ປັກຮັກສາສິ່ງແວດລ້ອມ ສົ່ງຜົນຕໍ່ຜົນສຳເລັດໃນການ ດຳເນີນງານໂດຍລວມ ແລະ ຜົນການດາເນີນງານດ້ານການ ຕະຫຼາດ, ປັດໄຈການມີສ່ວນຮ່ວມຕໍ່ສັງຄົມດ້ານການ ພັດທະນາຊຸມຊົນ ແລະ ສັງຄົມ ສົ່ງຜົນຕໍ່ຜົນການດຳເນີນ ງານໂດຍລວມ, ຜົນການດຳເນີນງານດ້ານການເງິນ, ດ້ານ ການບໍລິຫານການບໍລິຫານຈັດການຂອງທຸລະກິດເຮືອນພັກ , ປັດໄຈການມີສ່ວນຮ່ວມຕໍ່ສັງຄົມດ້ານການຮັບຜິດຊອບຕໍ່ ລູກຄ້າ/ຜູ້ບໍລິໂພກສົ່ງຜົນຕໍ່ຜົນການດຳເນີນງານໂດຍລວມ, ຜົນການດຳເນີນງານດ້ານການຕະຫຼາດ ແລະ ສົ່ງຜົນຕໍ່ດ້ານ ການບໍລິຫານການຜະລິດ /ການບໍລິການ ທີ່ມີລະດັບຄວາມ ສຳຄັນທາງສະຖິຕິ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍ ປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການ ດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບ ພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນ ໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ຄະນະພັກແຂວງຫຼວງພະບາງ. (2020). *ເອກະສານກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ແຂວງຫຼວງພະບາງ ຄັ້ງທີ VIII.*

ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວແຂວງຫຼວງພະບາງ. (2020). *ບົດສະຫຼຸບວຽກງານພົ້ນເດັ່ນໃນຂະແໜງການທ່ອງທ່ຽວ 5 ປີ 2015-2019.* ໜ້າ 2.

ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ, ຂະແໜງຄຸ້ມຄອງທຸລະກິດການທ່ອງທ່ຽວ. (2023). *ສະຖິຕິຂອງຫົວໜ່ວຍທຸລະກິດສະຖານທີ່ພັກແຮມ ໃນນະຄອນຫຼວງພະບາງ.*

Chahmavong, A. (2021). *Factors related to the success of service business in LuangPrabang City, LuangPrabang province* [Master thesis] Faculty of Economic and Tourism. Souphanouvong University.

Aranyamartteetat, D. (2020). *The impact of corporate social responsibility on consumer's decision making in Bangkok* [Master thesis] Ramkhamhaeng University. Thailand. p. 11-13.

Hoongsengpha, S., Indavong, D., Khomthavong, P., Somsaksaysompheng, U., Phomma, S., Sithirajtvongsa, V., Phengsavath, S., & Oupravanh, Y. (2020). The success factors of SME business in Luangpabang capital. Souphanouvong University Journal of Multidisciplinary Research and Development, .*6*(1), 154-161.

SinKhow, P. (2013). *Corporate social responsibility (CSR) affecting the corporate image of ThaiNamthip company limited in Pathum Thani province* [Master thesis] Majoring in Marketing. Faculty of Business

Administration. Thanyaburi Rajamongkol University of Technology.

Heonsawang, P., & Jewjinda, J. (2020). Success factors of operating a Thai restaurant business in the United States. *Journal of Administrative and Management Innovation*, *8*(3), 106-115.

Institute of Social Business. (2009). *Social business compass*. Bangkok: Icon Printing House.

Kanchanamusic, W. (2011). *Conducting corporate social responsibility (CSR) activities that affect consumer purchasing decisions for products and services in Bangkok* [Master thesis] Majoring in Business Administration. Bangkok University.

Kettapha, K. (2019). *Component and pattern of strategic corporate social responsibility in southern Thai hotels business*. The 11th national and international academic conference and presentation of Research Results.

Kotler, P., & Lee, N. (2005). *Business management*. NJ: Prentice Hall.

Lattanakone, P. (2023). Factors affecting small and medium enterprises (SMEs) operators in LuangPrabang City. *Souphanouvong University Journal of multidisciplinary research and development, 9*(2), 138-145.

Petchdee, K. (2021). *Community behavior and perception related to corporate social responsibility (CSR) Activities of WHA industrial zone, Saraburi* [Master thesis] Faculty Business Administration. Rajamangala University of Technology Phra Nakhon.

Siljiru, T. (2010). *Research and statistical data analysis by SPSS and AMOS*. (11th Ed.). ISBN: 9789741044108. Bangkok: business R and D ordinary partnership.

Sopapron, N. (2007). *Management strategies for hotel industry in Koh Smui* [Master thesis] Dhurakij Pundit University.

Songsiri, W. (2015). *Factor affecting of corporate social responsibility (CSR): A case study of IRPC public company limited author* [Master thesis] School of Environmental Development Administration. National institute of development administration.